# ການສຶກສາສຳຫຼວດເບື້ອງຕົ້ນກ່ຽວກັບອົງການຈັດຕັ້ງທາງສັງຄົມ ແລະ ຊຸມຊົນໃນ ສປປ ລາວ

## ບົດສະຫລຸບຫຍໍ້ຂໍ້ມູນຂອງປະເທດ



ຊ່າງຍ້ອມແຜ່ນແພພື້ນເມືອງຢູ່ ສປປ ລາວ.
ຮູບພາບໂດຍ: ພູນຊັບ.

AMPLIFY
The Asia Foundation
NEW ZEALAND
FOREIGN AFFAIRS & TRADE
Manatū Aorere

# AMPLIFY

ແຜນງານ AMPLIFY ເປັນໂຄງການລິເລີ່ມວຽກງານແມ່ຍິງ, ສັນຕິພາບ ແລະ ຄວາມຫມັ້ນຄົງ (WPS) ມີໄລຍະເວລາ 5 ປີ ເຊິ່ງເພື່ອແກ້ໄຂຜົນກະທົບຂອງຄວາມຂັດແຍ່ງທີ່ແຕກຕ່າງກັນ ແລະ ການຄຸກຄາມຕໍ່ຄວາມໝັ້ນຄົງຂອງມະນຸດ ທີ່ມີຕໍ່ແມ່ຍິງໃນພາກພື້ນອາຊີຕາເວັນອອກສຽງໃຕ້ ໂດຍການຊຸກຍູ້ການມີສ່ວນຮ່ວມຢ່າງຫ້າວຫັນຂອງພວກເຂົາໃນການປ້ອງກັນຄວາມຂັດແຍ່ງ ແລະ ການສ້າງສັນຕິພາບ.

ຂໍ້ລິເລີ່ມດັ່ງກ່າວແມ່ນໃຫ້ການສະໜັບສະໜູນການຈັດຕັ້ງປະຕິບັດ ແຜນປະຕິບັດງານພາກພື້ນອາຊຽນ ວ່າດ້ວຍວຽກງານ ແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ (WPS) ແລະ ໄດ້ສຸມໃສ່ປະເທດ ກຳປູເຈຍ, ສປປ ລາວ ແລະ ມຽນມາ ໂດຍຜ່ານການພັດທະນານະໂຍບາຍ, ການຮ່ວມມືກັບພາກສ່ວນອົງການຈັດຕັ້ງທາງສັງຄົມ ແລະ ການສ້າງສັນຕິພາບໃນລະດັບຊຸມຊົນ. ແຜນງານ AMPLIFY ແມ່ນໄດ້ຮັບການສະໜອງທຶນໂດຍ ກະຊວງການຕ່າງປະເທດ ແລະ ການຄ້າ ລັດຖະບານປະເທດນິວຊີແລນ ແລະ ຈັດຕັ້ງປະຕິບັດໂດຍ ມູນນິທິເອເຊຍ.

**ແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ (WPS)** ແມ່ນຂອບເຂດນະໂຍບາຍທົ່ວໂລກທີ່ຮັບຮູ້ວ່າການມີສ່ວນຮ່ວມຢ່າງມີຄວາມໝາຍຂອງແມ່ຍິງໃນການສ້າງສັນຕິພາບ ແລະ ການຕັດສິນໃຈແມ່ນມີຄວາມສຳຄັນທີ່ສຸດເພື່ອບັນລຸສັນຕິພາບ ແລະ ປ້ອງກັນການເກີດຄວາມຂັດແຍ່ງ. ວຽກງານ WPS ແມ່ນອີງໃສ່ມະຕິຂອງສະພາຄວາມໝັ້ນຄົງສະຫະປະຊາຊາດ ເລກທີ 1325 ແລະ ມະຕິຕໍ່ໆມາ ໂດຍອີງໃສ່ 4 ເສົາຄ້ຳຂອງວຽກງານດັ່ງກ່າວ ເຊິ່ງປະກອບມີ ການມີສ່ວນຮ່ວມ, ການປ້ອງກັນ, ການປົກປ້ອງ, ການບັນເທົາທຸກ ແລະ ການຟື້ນຟູ ເນັ້ນໜັກເຖິງຄວາມຈຳເປັນ ໃນການປົກປ້ອງ ແລະ ສົ່ງເສີມສິດທິຂອງແມ່ຍິງໃນສະຖານະການທີ່ອ່ອນໄຫວ ແລະ ມີຂໍ້ຂັດແຍ່ງ. ໂຄງການ AMPLIFY ໄດ້ນຳໃຊ້ແນວທາງ WPS + ເຊິ່ງນຳໄປໃຊ້ໄດ້ກວ້າງຂວາງກວ່າໃນສະຖານະການທີມີຄວາມຂັດແຍ່ງໂດຍແມ່ນແນໃສ່ແກ້ໄຂໄພຄຸກຄາມດ້ານຄວາມໝັ້ນຄົງຂອງມະນຸດ.

# ບົດສະຫລຸບຫຍໍ້ຂໍ້ມູນຂອງປະເທດ

ໃນປີ 2024 ແຜນງານ AMPLIFY ໄດ້ດຳເນີນການສຶກສາສຳຫຼວດຂອບເຂດ ໃນສາມປະເທດທີ່ນຳໄປຈັດຕັ້ງປະຕິບັດ ຄື ກຳປູເຈຍ, ສປປ ລາວ ແລະ ມຽນມາ ເພື່ອເຂົ້າໃຈສິ່ງທ້າທາຍຕ່າງໆ ທີ່ແມ່ຍິງພົບພໍ້ໃນທຸກຂັ້ນຂອງສັງຄົມໃຫ້ດີຂຶ້ນ.

ຢູ່ປະເທດກຳປູເຈຍ ແລະ ສປປ ລາວ ການຄົ້ນຄວ້າໄດ້ລວມເອົາການສຳຫຼວດຊຸມຊົນ, ການສຳພາດຜູ້ໃຫ້ຂໍ້ມູນສຳຄັນ ແລະ ການປະເມີນຄວາມຕ້ອງການຂອງອົງການຈັດຕັ້ງທາງສັງຄົມ (CSO). ຢູ່ມຽນມາ ການສຳພາດໄດ້ສຳຫຼວດສິ່ງທ້າທາຍຕ່າງໆ ທີ່ບັນດາອົງການສິດທິແມ່ຍິງ, ນັກປົກປ້ອງສິດທິມະນຸດແມ່ຍິງ ແລະ ນັກເຄື່ອນໄຫວ ຢູ່ທັງສອງຝັ່ງຊາຍແດນໄທ–ມຽນມາ ກຳລັງປະເຊີນ.

ການສຶກສາເຫຼົ່ານີ້ໄດ້ຮັບການປັບປຸງຕື່ມອີກ ໂດຍການປຶກສາຫາລືແບບບໍ່ເປັນທາງການກັບພາກສ່ວນກ່ຽວຂ້ອງ ແລະ ໂດຍການວິເຄາະເສດຖະກິດການເມືອງ (Political Economy Analysis), ຊື່ວ່າ “**ການຮັບປະກັນສັນຕິພາບຂອງແມຍິງ: ການວິເຄາະເສດຖະກິດການເມືອງຂອງແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ ໃນອາຊຽນ, ກຳປູເຈຍ, ສປປ ລາວ ແລະ ຟີລິບປິນ**” ເຊິ່ງໄດ້ດຳເນີນໃນຕົ້ນປີ 2025.

ບົດສະຫລຸບຫຍໍ້ຂໍ້ມູນນີ້ ແມ່ນອີງໃສ່ການຄົ້ນຄວ້າດັ່ງກ່າວ ເພື່ອນຳສະເໜີຂໍ້ຄົ້ນພົບ ແລະ ຄວາມເຂົ້າໃຈທີ່ສຳຄັນທີ່ສຸດ ເຊິ່ງກ່ຽວຂ້ອງກັບການຈັດຕັ້ງປະຕິບັດວາລະການດຳເນີນງານຂອງແຜນງານ WPS. ບົດສະຫຼຸບເຫຼົ່ານີ້ມີຈຸດປະສົງເພື່ອເປັນແຫຼ່ງຂໍ້ມູນສຳລັບ ອົງການຈັດຕັ້ງທາງສັງຄົມ (CSO), ຜູ້ວາງນະໂຍບາຍ ແລະ ຜູ້ໃຫ້ທຶນ ທັງເປັນສ່ວນໜຶ່ງຂອງຄຳໝັ້ນສັນຍາຢ່າງຕໍ່ເນື່ອງຂອງ ແຜນງານ AMPLIFY ໃນການສ້າງ ແລະ ແບ່ງປັນຄວາມຮູ້ກ່ຽວກັບ WPS ໃນຂັ້ນພາກພື້ນ.



# ສປປ ລາວ

- ສະພາບການກ່ຽວກັບແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ ໃນ ສປປ ລາວ
- ປະສົບການຂອງອົງການຈັດຕັ້ງທາງສັງຄົມໃນວຽກງານ WPS
- ການເຄື່ອນຍ້າຍແຮງງານ ແລະ ການຄ້າມະນຸດ
- ການຄຸ້ມຄອງຊັບພະຍາກອນທຳມະຊາດ
- ແນວທາງການຈັດຕັ້ງປະຕິບັດຂອງ AMPLIFY

# ສປປ ລາວ

## ສະພາບການກ່ຽວກັບແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ ໃນ ສປປ ລາວ

ວາລະແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ. (WPS) ເປັນກອບການຈັດຕັ້ງປະຕິບັດທີ່ໄດ້ນຳສະເໜີ ແລະ ຈັດຕັ້ງປະຕິບັດໃໝ່ ໃນ ສປປ ລາວ ເຖິງແນວໃດກໍຕາມ ຫຼັກການພື້ນຖານຂອງວາລະນີ້ບໍ່ໄດ້ເປັນສິ່ງໃໝ່ ຫຼື ບໍ່ຄຸ້ນເຄີຍແຕ່ຢ່າງໃດ ແຕ່ກົງກັນຂ້າມ ວາລະ WPS ສ້າງຂຶ້ນບົນວຽກງານທີ່ໄດ້ຈັດຕັ້ງປະຕິບັດມາກ່ອນແລ້ວໃນ ສປປ ລາວ ເພື່ອແກ້ໄຂຄວາມໝັ້ນຄົງ, ສິດທິດ້ານຮ່າງກາຍ ແລະ ເສດຖະກິດຂອງແມ່ຍິງໃນປີ 1981. ລັດຖະບານ ສປປ ລາວ ໄດ້ໃຫ້ສັດຕະຍາບັນຕໍ່ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ (CEDAW) ເຊິ່ງເປັນການວາງພື້ນຖານດ້ານ ຫຼັກການສຳລັບການພິຈາລະນາການມີສ່ວນຮ່ວມຢ່າງມີຄວາມໝາຍຂອງແມ່ຍິງໃນທຸກຮູບແບບຂອງການຕັດສິນໃຈ ເຊິ່ງວາລະການເຮັດວຽກຂອງ WPS ໄດ້ສືບຕໍ່ເສີມຂະຫຍາຍນັບແຕ່ນັ້ນມາ ໂດຍການເຊື່ອມໂຍງການມີສ່ວນຮ່ວມຂອງແມ່ຍິງເຂົ້າກັບສັນຕິພາບ ແລະ ຄວາມໝັ້ນຄົງ. ນັບແຕ່ນັ້ນມາ ວຽກງານທີ່ກ່ຽວຂ້ອງກັບ WPS ໄດ້ເກີດຂຶ້ນເຖິງແມ່ນວ່າມັນຈະຖືກກຳນົດໃນຫຼາຍຮູບແບບ ເຊັ່ນ: ຄວາມພະຍາຍາມເພື່ອສົ່ງເສີມຄວາມສະເໝີພາບ, ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ພາລະບົດບາດການນຳພາຂອງແມ່ຍິງ. ໂດຍການນຳເອົາວາລະ WPS ເຂົ້າມາເປັນຂອບການຈັດຕັ້ງປະຕິບັດຢ່າງເປັນທາງການເມື່ອບໍ່ດົນມານີ້ ພາກສ່ວນກ່ຽວຂ້ອງຕ່າງໆໃນ ສປປ ລາວ (ລວມທັງລັດຖະບານ, ສະຖານທູດ, ອົງການຈັດຕັ້ງສາກົນ ແລະ ອົງການຈັດຕັ້ງທາງສັງຄົມ) ເຂົ້າໃຈວ່າ WPS ເປັນຄຳສັບລວມສຳລັບໂຄງການຂອງ ແມ່ຍິງທີ່ມີມາກ່ອນ ແລະ ນຳໃຊ້ WPS ເພື່ອຊອກຫາທາງອອກໃຫ້ແກ່ບັນຫາສັນຕິພາບ ແລະ ຄວາມໝັ້ນຄົງໃນບໍລິບົດທ້ອງຖິ່ນ.

ໃນ ສປປ ລາວ ໄດ້ມີຄະນະກຳມະທິການຂອງລັດຖະບານ, ອົງການຈັດຕັ້ງມະຫາຊົນຕ່າງໆ ເຊັ່ນ: ສະຫະພັນແມ່ຍິງລາວ, ຄະນະກຳມະການແຫ່ງຊາດ ເພື່ອຄວາມກ້າວໜ້າຂອງແມ່ຍິງ, ແມ່ ແລະ ເດັກ, ແນວລາວສ້າງຊາດ ແລະ ກຸ່ມແມ່ຍິງສະພາແຫ່ງຊາດ ລວມທັງຄະນະກຳມະທິການຊົນເຜົ່າຂອງສະພາແຫ່ງຊາດ ທີ່ໄດ້ມີບົດບາດສຳຄັນໃນການຊຸກຍູ້ການມີສ່ວນຮ່ວມຂອງແມ່ຍິງ, ສົ່ງເສີມຄວາມສະເໝີພາບ ແລະ ປົກປ້ອງສິດທິຂອງແມ່ຍິງ. ເຖິງຢ່າງໃດກໍ່ຕາມຄວນມີການສັງເກດວ່າ ເຖິງແມ່ນວ່າຈະມີຫຼາຍນະໂຍບາຍທີ່ກຳນົດໃຫ້ມີການປະກອບສ່ວນຂອງແມ່ຍິງໃນທຸກຂັ້ນຂອງປະເທດ ແຕ່ການມີສ່ວນຮ່ວມຂອງແມ່ຍິງຍັງຕໍ່າກວ່າເປົ້າໝາຍທີ່ກຳນົດໄວ້ໃນຕຳແໜ່ງລັດຖະບານຂັ້ນສູນກາງ (30%), ໃນຂັ້ນແຂວງ (20%) ແລະ ຂັ້ນບ້ານ (10%), ໂດຍສະເພາະແມ່ນກຸ່ມແມ່ຍິງທີ່ມາຈາກກຸ່ມດ້ອຍໂອກາດ ຕາມທີ່ໄດ້ລາຍງານໄວ້ໃນໃນບົດສະຫຼຸບຜົນການສັງເກດການຂອງ CEDAW ປະຈຳປີ 2024.[1]

---

**1** CEDAW (ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບຂອງການຈຳແນກຕໍ່ແມ່ຍິງ). 2024. “ບົດສະຫຼຸບຂໍ້ສັງເກດຕໍ່ກັບບົດລາຍງານໄລຍະທີ 10 ຂອງ ສປປ ລາວ.” ເອກະສານຂອງ ອົງການສະຫະປະຊາຊາດເລກທີ CEDAW/C/LAO/CO/10. ບົດສະຫລຸບຫຍໍ້ຂໍ້ມູນຂອງປະເທດ ສປປລາວການສຶກສາກ່ຽວກັບອົງການຈັດຕັ້ງທາງສັງຄົມ ແລະຊຸມຊົນ

ໃນລະດັບຊຸມຊົນໃນ ສປປ ລາວ ວາລະ WPS ມີຄວາມສຳພັນສູງກັບການເຄື່ອນຍ້າຍແຮງງານທັງພາຍໃນ ແລະ ລະຫວ່າງ ສປປ ລາວ ກັບປະເທດເພື່ອນບ້ານ. ຕົວເລກລຸ່ມນີ້ສະແດງໃຫ້ເຫັນເຖິງການເຄື່ອນຍ້າຍແຮງງານຂອງລາວ ການຫຼັ່ງໄຫຼຂອງແຮງງານເຫຼົ່ານີ້ມັກຈະພົວພັນກັບ 6 ປັດໄຈສຳຄັນຕາມທີ່ໄດ້ລະບຸໄວ້ໃນການສຶກສາສຳຫຼວດຂອບເຂດ ຂອງແຜນງານ AMPLIFY ຄື: ຄວາມຮຸນແຮງຕໍ່ກັບແມ່ຍິງ ການດື່ມເຫຼົ້າ/ໃຊ້ຢາເສບຕິດ, ການແຕ່ງດອງທີ່ຜິດກົດໝາຍ, ວຽກທີ່ມີຄວາມສ່ຽງສູງ, ການອອກໂຮງຮຽນ ແລະ ປິດໂຮງຮຽນ ແລະ ການຈັດຕັ້ງປະຕິບັດກົດລະບຽບທຸລະກິດ ແລະ ການເຄື່ອນຍ້າຍແຮງງານ.[2]

**ຮູບທີ 1: ແຜນທີການເຄື່ອນຍ້າຍແຮງງານລາວ**




2 ການຄົ້ນຄວ້ານີ້ໄດ້ຖືກດຳເນີນລະຫວ່າງ ເດືອນສິງຫາ ຫາ ເດືອນກັນຍາ ປີ 2024. ບົດລາຍງານທີ່ຜະລິດອອກມານີ້ ແມ່ນສຳລັບການນຳໃຊ້ພາຍໃນຂອງອົງການ ມູນນິທິເອເຊຍເທົ່ານັ້ນ ແລະ ບໍ່ໄດ້ມີຈຸດປະສົງເພື່ອເຜີຍແຜ່ທາງນອກ.

# ປະສົບການຂອງອົງການຈັດຕັ້ງທາງສັງຄົມຕໍ່ກັບວຽກງານແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ

ສີພອນ ເຮັດວຽກໃຫ້ແກ່ອົງການຈັດຕັ້ງທາງສັງຄົມແຫ່ງໜຶ່ງ ແລະ ລາວມີຄວາມມຸ່ງມາດປາດຖະໜາທີ່ຈະສ້າງຊີວິດການເປັນຢູ່ແບບຍືນຍົງໃຫ້ແກ່ຊຸມຊົນທີ່ເປັນຊົນເຜົ່າ.

ໃນການເຮັດວຽກກັບຊຸມຊົນທີ່ເປັນຊົນເຜົ່າໂດຍສະເພາະແມ່ຍິງ ລາວໄດ້ເລົ່າວ່າ: ແມ່ຍິງຢູ່ເຂດຊົນນະບົດເປັນຄົນຂີ້ອາຍ ແລະ ມິດງຽບ. ດັ່ງນັ້ນ ມັນຈຶ່ງເປັນສິ່ງທ້າທາຍຫຼາຍໃນການເຮັດວຽກເພື່ອສົ່ງເສີມການມີສ່ວນຮ່ວມ ແລະ ບົດບາດການເປັນຜູ້ນໍາຂອງແມ່ຍິງ. ເຖິງຢ່າງໃດກໍ່ຕາມ ເມື່ອເວົ້າເຖິງການຈັດຕັ້ງປະຕິບັດ ແມ່ຍິງເປັນຜູ້ທີ່ເຮັດວຽກໜັກທີ່ສຸດຢ່າງບໍ່ຕ້ອງສົງໄສ.

ສະມາຊິກອົງການຈັດຕັ້ງທາງສັງຄົມມັກຈະເຮັດວຽກຢູ່ແຖວໜ້າ ແລະ ຕ້ອງສາມາດປັບຕົວໄດ້ເມື່ອປະເຊີນກັບຄວາມສ່ຽງ. ສີພອນ ໄດ້ຍົກຕົວຢ່າງເຖິງຕອນທີ່ໂຄງການໜຶ່ງຂອງພວກເຂົາ ໄດ້ເຮັດໃຫ້ເກີດຄວາມບໍ່ພໍໃຈແບບບໍ່ຄາດຄິດຈາກຊຸມຊົນທີ່ເຂົາເຈົ້າເຮັດວຽກຮ່ວມນໍາ "**ມັນເປັນຕາຢ້ານຫລາຍ ແລະ ພວກຂ້າພະເຈົ້າ ໄດ້ຕັດສິນໃຈທີ່ຈະບໍ່ເຂົ້າໄປຮ່ວມໂດຍກົງໃນການແກ້ໄຂບັນຫາ ແຕ່ໄດ້ໃຊ້ວິທີການອື່ນທີ່ລະອຽດອ່ອນກວ່າແທນ**".

ອົງການຈັດຕັ້ງທາງສັງຄົມໄດ້ຮັບການຍອມຮັບຫລາຍຂຶ້ນ. ໃນຊຸມປີທີ່ຜ່ານມາ ພວກເຂົາໄດ້ເຂົ້າຮ່ວມກັບອົງການຜູ້ໃຫ້ທຶນ ແລະ ພາກສ່ວນລັດຖະບານຫຼາຍຂຶ້ນ ເພື່ອຈັດຕັ້ງປະຕິບັດໂຄງການໃນຊຸມຊົນ ແລະ ພວກເຂົາມີໂອກາດຫລາຍຂຶ້ນໃນການສ້າງແຮງຈູງໃຈ ແລະ ເຂົ້າເຖິງກຸ່ມເປົ້າໝາຍທີ່ກວ້າງຂວາງກວ່າ. ຕົວຢ່າງຫລ້າສຸດແມ່ນນັບຕັ້ງແຕ່ປີ 2023 ທີ່ອົງການຈັດຕັ້ງທາງສັງຄົມໃນປະເທດ ສາມາດຍື່ນບົດລາຍງານຄູ່ຂະໜານຕໍ່ຄະນະກໍາມະການ CEDAW ໃນທຸກໆປີ ເຊິ່ງສະແດງເຖິງຄວາມຄືບໜ້າທີ່ມີຄວາມໝາຍໃນການສົ່ງເສີມຄວາມຮັບຜິດຊອບຂອງລັດຖະບານໃຫ້ຫລາຍຂຶ້ນ.

ອົງການຈັດຕັ້ງທາງສັງຄົມເຫລົ່ານີ້ເຮັດວຽກຕົ້ນຕໍໃນ 5 ຂະແໜງການຄື: ການສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດ, ການປັບໂຕທາງດ້ານສິ່ງແວດລ້ອມ, ກົດໝາຍ/ຂໍ້ຂັດແຍ່ງທາງດ້ານກົດໝາຍ, ການຄຸ້ມຄອງໄພພິບັດ ແລະ ລູກລະເບີດບໍ່ທັນແຕກ ເຊິ່ງທັງໝົດນີ້ແມ່ນສິ່ງຜົນກະທົບຕໍ່ແມ່ຍິງ ແລະ ເດັກຍິງ.

ອົງການຈັດຕັ້ງທາງສັງຄົມ ມັກຈະປະເຊີນກັບອຸປະສັກດ້ານການບໍລິຫານທີ່ສັບສົນ ແລະ ການດໍາເນີນງານໃນພື້ນທີ່ທີ່ຈໍາກັດ. ບັນຫາເຫຼົ່ານີ້ຍິ່ງເພີ່ມຄວາມສັບສົນຂຶ້ນ **ຍ້ອນຄວາມກັງວົນດ້ານຄວາມປອດໄພ**ທີ່ສະມາຊິກອົງການຈັດຕັ້ງທາງສັງຄົມປະສົບໃນເວລາເຮັດວຽກກ່ຽວກັບວາລະ WPS ແລະ ບັນຫາສັງຄົມຕ່າງໆ.

ອົງການຈັດຕັ້ງທາງສັງຄົມ ຈໍານວນຫລາຍ ໄດ້ສະແດງຄວາມສົນໃຈໃນການຮັບການສະໜັບສະໜູນເພີ່ມຕື່ມອີກເພື່ອການສ້າງຄວາມອາດສາມາດ ໂດຍສະເພາະແມ່ນເພື່ອປັບປຸງທັກສະທາງດ້ານພາສາອັງກິດ, ການຄຸ້ມຄອງການເງິນ ແລະ ການດໍາເນີນງານ, ການຂຽນຂໍສະເໜີໂຄງການ ແລະ ຄວາມຮູ້ດ້ານວິຊາການ.

# ການເຄື່ອນຍ້າຍແຮງງານ ແລະ ການຄ້າມະນຸດ

ນາງ ມີອາຍຸຢູ່ໃນຊ່ວງ 20 ປີ ຕົ້ນໆ ແລະ ມາຈາກຄອບຄົວທີ່ເຮັດກະສິກຳແບບພໍກຸ້ມຢູ່ກຸ້ມກິນ ທີ່ອາໄສຢູ່ພາກໃຕ້ຂອງ ສປປລາວ ດ້ວຍການຊຸກຍູ້ຈາກພໍ່ ແລະ ແມ່ ນາງ ຫວັງວ່າຈະສາມາດຫາລາຍໄດ້ເພີ່ມຂຶ້ນໃຫ້ແກ່ຕົນເອງ ແລະ ຄອບຄົວ ແລະ ພວມຊອກຫາຊ່ອງທາງຕ່າງໆ ເພື່ອບັນລຸສິ່ງນັ້ນ.

ນາງ ໄດ້ພົບເຫັນໂຄສະນາຢູ່ໃນສື່ສັງຄົມອອນລາຍເຊິ່ງຕ້ອງການແມ່ຍິງໄວໜຸ່ມ ແລະ ໂຄສະນາໄດ້ໃຫ້ຄຳໝັ້ນສັນຍາວ່າຈະຈ່າຍຄ່າຕອບແທນສູງຢູ່ພາກເໜືອຂອງ ສປປ ລາວ. ລາວໄດ້ເລົ່າວ່າ “**ພໍ່ແມ່ຂອງຄົນບ້ານໃກ້ເຮືອນຄຽງຈຳນວນໜຶ່ງໄດ້ຊຸກຍູ້ໃຫ້ລູກຂອງພວກເຂົາ ອອກໂຮງຮຽນໄປເຮັດວຽກ ຫຼື ແຕ່ງງານເພື່ອເອົາຄ່າດອງ**”. ດັ່ງນັ້ນ, ນາງຈຶ່ງໄດ້ຂໍເງິນເປັນຄ່າໃຊ້ຈ່າຍສ່ວນຕົວຈາກພໍ່ແມ່ ແລະ ຍາດພີ່ນ້ອງ ຈາກນັ້ນລາວໄດ້ມຸ່ງໜ້າໄປນະຄອນຫຼວງ ວຽງຈັນເພື່ອເຮັດວຽກເປັນພະນັກງານເສີບຢູ່ຮ້ານອາຫານ ແລະ ຮ້ານບັນເທີງ ກ່ອນທີ່ຈະໄປເຂດເສດຖະກິດພິເສດຢູ່ພາກເໜືອເພື່ອຫາລາຍໄດ້ທີ່ສູງກວ່າ.

ນາງ ບໍ່ຮູ້ເລີຍວ່າຕົນເອງຈະຕ້ອງໄປຈົບລົງດ້ວຍການເຮັດວຽກໃນສະຖານບັນເທີງ ແລະ **ແມ່ຍິງເຊັ່ນດຽວກັບນາງ, ທີ່ອາໄສຢູ່ໃນບັນດາແຂວງຊາຍແດນຕິດກັບ**ຈີນ ແລະ ໄທ**ຈະພົບກັບສິ່ງທ້າທາຍ ເນື່ອງຈາກຜູ້ຊື້ບໍລິການທາງເພດແມ່ນມາຈາກອາຊີຕາເວັນອອກ ສູ່ອາຊີຕາເວັນອອກສຽງໃຕ້**.

**ການເຄື່ອນຍ້າຍແຮງງານໃນ ສປປ ລາວ ແມ່ນເກີດມາຈາກຄວາມທຸກຍາກ ແລະ ການຂາດໂອກາດໃນວຽກທີ່ມີຄ່າຕອບແທນພຽງພໍ** ສຳລັບໄວໜຸ່ມໃນຊຸມຊົນຂອງເຂົາເຈົ້າເຊິ່ງເຮັດໃຫ້ຜູ້ຊາຍ ແລະ ແມ່ຍິງພົບກັບໄພຄຸກຄາມທາງດ້ານສັນຕິພາບແລະ ຄວາມໝັ້ນຄົງໃນສະຖານທີ່ທີ່ເຄື່ອນຍ້າຍໄປຢູ່.

ບຸກຄົນທີ່ເຄື່ອນຍ້າຍສ່ວນຫລາຍແມ່ນເປັນກຸ່ມໄວໜຸ່ມທີ່ມີອາຍຸ 21 ຫາ 25 ປີ ຕາມມາດ້ວຍກຸ່ມອາຍຸ 26 ຫາ 30 ປີ ເຊິ່ງມັກຈະຝາກລູກຂອງຕົນເອງຢູ່ກັບການດູແລຂອງສະມາຊິກໃນຄອບຄົວຜູ້ສູງອາຍຸທີ່ຢູ່ບ້ານເກີດ.[3] ບົດລາຍງານຕ່າງໆ ຊີ້ໃຫ້ເຫັນວ່າບຸກຄົນໄດ້ຖືກຕົວະຍົວະ ດ້ວຍຄຳໝັ້ນສັນຍາວ່າຈະຈ່າຍເງິນເດືອນສູງ ແລະ ມັກຈະຖືກຊັກຊວນເຂົ້າເຮັດວຽກຜ່ານສື່ສັງຄົມອອນລາຍ ເພື່ອໄປເຮັດວຽກຢູ່ເຂດເສດຖະກິດພິເສດ ໂດຍສະເພາະແມ່ນຢູ່ທາງພາກເໜືອຂອງ ສປປ ລາວ.

ຫຼາຍຄົນກາຍເປັນ **ຜູ້ເຄາະຮ້າຍຈາກການຄ້າມະນຸດ, ຖືກຂູດຮີດແຮງງານ ຫຼື ຖືກບັງຄັບໃຫ້ເຮັດວຽກບໍລິການທາງເພດ**ໂດຍສະເພາະແມ່ນແມ່ຍິງ ພວກເຂົາຖືກກັກຂັງຜ່ານວິທີການຕ່າງໆ ເຊັ່ນ: ການຄວບຄຸມດ້ວຍສານເສບຕິດ, ການກັກຂັງເພື່ອຮຽກເອົາຄ່າໄຖ່ ແລະ ການຍຶດເອກະສານສ່ວນຕົວແບບບໍ່ໄດ້ຮັບຄວາມຍິນຍອມທີ່ຜິດກົດໝາຍ ແລະ ອື່ນໆ. ສປປ ລາວ **ຢູ່ໃນບັນຊີລາຍຊື່ສັງເກດການຂັ້ນທີ** 2 (Tier 2 Watch List) ສຳລັບການຄ້າມະນຸດ ເນື່ອງຈາກເກືອບທຸກກໍລະນີຂອງຜູ້ເຄາະຮ້າຍທີ່ໄດ້ຖືກນຳອອກມາຈາກເຂດເສດຖະກິດພິເສດ ແມ່ນໄດ້ຖືກລາຍງານວ່າ “**ເປັນກໍລະນີຂໍ້ຂັດແຍ່ງດ້ານແຮງງານ**” **ແທນທີ່ຈະເປັນການດຳເນີນຄະດີການຄ້າມະນຸດ**.[4] ໃນສະຖານະການເຫຼົ່ານີ້ ແມ່ຍິງມັກຈະພົບກັບຄວາມສ່ຽງທີ່ສຳຄັນ ແລະ ບໍ່ເທົ່າທຽມຍ້ອນບັນຫາອຸປະສັກທາງດ້ານພາສາ, ການຂາດແຄນທຶນ, ຄວາມຮູ້ ແລະ ການເຂົ້າເຖິງເຄືອຂ່າຍຕ່າງໆໃນສັງຄົມ.

---

**3** ອົງການຈັດຕັ້ງສາກົນເພື່ອການເຄື່ອນຍ້າຍຖິ່ນຖານ (IOM), ບົດລາຍງານການສຳຫຼວດຕິດຕາມການເຄື່ອນຍ້າຍຖິ່ນຖານຂອງ ສປປ ລາວ ໃນປີ 2022 (IOM Lao PDR, 2022), 04,<Flow Monitoring Report 2022.pdf>

**4** ກະຊວງການຕ່າງປະເທດ ສະຫະລັດອາເມລິກາ (DOS), ບົດລາຍງານການຄ້າມະນຸດ ປະຈຳປີ 2024: ສປປ ລາວ (u.s. DOS 2024), <Lao PDR - United States Department of State>

# ການຄຸ້ມຄອງຊັບພະຍາກອນທຳມະຊາດ

ຈັນ ມີອາຍຸຢູ່ໃນຊ່ວງ 50 ປີ ແລະ ໄດ້ອາໄສຢູ່ໃນຫມູ່ບ້ານທີ່ຫ່າງໄກແຫ່ງໜຶ່ງໃກ້ກັບໜອງນ້ຳໃຫຍ່ໃນພາກໃຕ້ຂອງ ສປປ ລາວ ມາຕະຫຼອດຊີວິດ.

ເພື່ອລ້ຽງຫຼານສາວຂອງລາວ ຜູ້ທີ່ໄດ້ຢູ່ໃນການດູແລຂອງລາວມາຕັ້ງແຕ່ເກີດ ຍ້ອນວ່າພໍ່ແມ່ຂອງຫຼານຍ້າຍເຂົ້າໄປໃນຕົວເມືອງເພື່ອເຮັດວຽກ ຈັນຈຶ່ງຫາລາຍໄດ້ເລັກນ້ອຍໃນແຕ່ລະເດືອນດ້ວຍການເຮັດໄມ້ສຽບເອັນ ແລະ ສາດຕ່ຳ.

ລາວໄດ້ຮັບຜົນກະທົບດ້ານການເງິນຍ້ອນ**ເຮືອນຂອງນາງຖືກນ້ຳຖ້ວມໃນປີກາຍນີ້**ຈາກຝົນຕົກໜັກທີ່ເຮັດໃຫ້ນ້ຳໃນໜອງບຶງລົ້ນ. ບໍ່ດົນມານີ້ ນາງໄດ້ຍິນຈາກອຳນາດການປົກຄອງບ້ານວ່າ ໜອງບຶງດັ່ງກ່າວຈະຖືກຂາຍໃຫ້ແກ່ນັກລົງທຶນເອກະຊົນ ເຊິ່ງຈະນຳໄປປ່ຽນເປັນຮ້ານກາເຟ ແລະ ສະຖານທີ່ຕັ້ງແຄ້ມສຳລັບນັກທ່ອງທ່ຽວ. ດຽວນີ້ນາງຈັນ **ຕ້ອງໄດ້ຄິດຫາວິທີອື່ນໃນການຫາອາຫານ** ເນື່ອງຈາກລາວເຄີຍຫາປາ ແລະ ກົບຈາກໜອງບຶງດັ່ງກ່າວເປັນປະຈຳເພື່ອມາລ້ຽງຄອບຄົວຂອງລາວ.

ສປປ ລາວ ມີຄວາມສ່ຽງຕໍ່ໄພພິບັດທາງທຳມະຊາດ[5] ແລະ **ຂໍ້ຂັດແຍ່ງດ້ານຊັບພະຍາກອນທຳມະຊາດ** ເຊິ່ງຊຸມຊົນທີ່ດ້ອຍໂອກາດໄດ້ຮັບຜົນກະທົບຢ່າງບໍ່ເທົ່າທຽມຍ້ອນຄວາມທຸກຍາກ, ການເຊື່ອມໂຊມຂອງສິ່ງແວດລ້ອມ ແລະ ການພັດທະນາຕົວເມືອງ.

ກົນໄກເສດຖະກິດໃໝ່ຂອງປະເທດໄດ້ປ່ຽນທິດທາງ**ການສະແຫວງຫາຄວາມເຕີບໂຕຂອງປະເທດ** ໂດຍຫັນມາສຸມໃສ່**ຂະແໜງການທີ່ຕ້ອງອາໄສທຶນສູງ** ເຊັ່ນ: ພະລັງງານນ້ຳ, ການຂຸດຄົ້ນບໍ່ແຮ່ ແລະ ການສ້າງຕັ້ງເຂດເສດຖະກິດພິເສດ ທີ່ໃຫ້ບຸລິມະສິດແກ່ໂຄງການພື້ນຖານ**ໂຄງລ່າງຂະໜາດໃຫຍ່ ແລະ ໂຄງການອຸດສາຫະກຳສະກັດເອົາຊັບພະຍາກອນ**. ໃນຂະນະທີ່ສິ່ງເຫຼົ່ານີ້ໄດ້ຊຸກຍູ້ການເຊື່ອມຕໍ່ລະດັບພາກພື້ນ ແລະ GDP ໂດຍລວມຂອງ ສປປ ລາວ, ພວກມັນກໍ່ໄດ້ກໍ່ໃຫ້ເກີດການຍົກຍ້າຍປະຊາຊົນໃນຊຸມຊົນທີ່ດ້ອຍໂອກາດ ແລະ ຊົນນະບົດ, ການສູນເສຍວິຖີຊີວິດການເປັນຢູ່, ຜົນກະທົບທີ່ຮ້າຍແຮງຕໍ່ສິ່ງແວດລ້ອມ ນອກຈາກນັ້ນຍັງສ້າງຄວາມບໍ່ໝັ້ນຄົງໃໝ່ໃຫ້ແກ່ແມ່ຍິງ ໂດຍສະເພາະໃນເຂດຊາຍແດນຂອງເຂດເສດຖະກິດພິເສດ.

**ລະເບີດທີ່ຍັງບໍ່ທັນແຕກທີ່ຍັງຕົກຄ້າງ**[6] ຍັງຄົງເປັນໄພຄຸກຄາມຢ່າງຕໍ່ເນື່ອງໃນເຂດຊົນນະບົດ ເຊິ່ງໄດ້ສ້າງຄວາມທ້າທາຍຢ່າງຕໍ່ເນື່ອງໃຫ້ແກ່ການດຳລົງຊີວິດຂອງຊຸມຊົນໃນ ສປປ ລາວ.

---

**5** ບົດສະຫລຸບຂໍ້ມູນຂອງປະເທດແບບໂຕ້ຕອບການປ່ຽນແປງສະພາບອາກາດ (Interactive Country Fiches, 2025),<https://dicf.unepgrid.ch/lao-peoples-democratic-republic/climate-change>

**6** GUO, S. 2020. 'ຜົນກະທົບຂອງລະເບີດທີ່ຍັງບໍ່ທັນແຕກຕໍ່ຜົນສຳເລັດທາງດ້ານການສຶກສາໃນ ສປປ ລາວ'. ScienceDirect.<https://www.sciencedirect.com/science/article/abs/pii/S0304387820301024>

# ແນວທາງການຈັດຕັ້ງປະຕິບັດຂອງ ແຜນງານ AMPLIFY

ແຜນງານ AMPLIFY ໃນສປປ ລາວ ມີຄວາມພ້ອມທີ່ຈະຕອບສະໜອງຕໍ່ບັນຫາ ແລະ ສິ່ງທ້າທາຍຕ່າງໆ ທີ່ພົວພັນກັນ ຂອງການເຊື່ອມໂຊມຂອງສິ່ງແວດລ້ອມ, ໄພພິບັດທາງທຳມະຊາດ, ການເຄື່ອນຍ້າຍແຮງງານ, ລະເບີດບໍ່ທັນແຕກທີ່ຍັງຕົກຄ້າງ, ຂໍ້ຂັດແຍ່ງດ້ານຊັບພະຍາກອນທຳມະຊາດ ແລະ ການພັດທະນາຕົວເມືອງ. **ແຜນງານ AMPLIFY** ສປປ ລາວ ກຳລັງຊຸກຍູ້ວາລະແມ່ຍິງ, ສັນຕິພາບ ແລະ ຄວາມໝັ້ນຄົງ (WPS) ໃນລະດັບທ້ອງຖິ່ນ **ໂດຍສຸມໃສ່ແຂວງທີ່ມີຄວາມສ່ຽງສູງ (ບໍ່ແກ້ວ ແລະ ສະຫວັນນະເຂດ). ໂດຍຜ່ານການສະໜັບສະໜູນທີ່ອີງໃສ່ຫຼັກຖານ ແລະ ເນັ້ນໃສ່ຊຸມຊົນເປັນຫຼັກ**, ແຜນງານ AMPLIFY ພະຍາຍາມ**ສົ່ງເສີມບົດບາດການນຳພາຂອງແມ່ຍິງ**ໃນຂັ້ນທ້ອງຖິ່ນ ເພື່ອຮັບປະກັນການມີສ່ວນຮ່ວມຂອງແມ່ຍິງ ແລະ ກຸ່ມດ້ອຍໂອກາດໃນການແກ້ໄຂບັນຫາຕົ້ນຕໍຂອງວາລະ WPS+. ສິ່ງເຫຼົ່ານີ້ລວມມີການວາງແຜນການປັບຕົວເຂົ້າກັບສິ່ງແວດລ້ອມ ແລະ ການຟື້ນຟູຫຼັງຈາກເກີດຂໍ້ຂັດແຍ່ງ. ແຜນງານ AMPLIFY ມີເປົ້າໝາຍທີ່ຈະສ້າງພື້ນທີ່ທີ່ຕອບສະໜອງສຳລັບອົງການຈັດຕັ້ງທາງສັງຄົມ, ສະຫະພັນແມ່ຍິງລາວ ແລະ ກຸ່ມແມ່ຍິງຊົນເຜົ່າ **ເພື່ອສ້າງຄວາມສາມາດໃນການເປັນຜູ້ນຳ ແລະ ຄວາມສາມາດໃນການໂຄສະນາເຜີຍແຜ່**, ເສີມສ້າງການປະສານງານ**ຜ່ານເວທີຂອງອົງການຈັດຕັ້ງທາງສັງຄົມ** ແລະ **ສ້າງອິດທິພົນຕໍ່ນະໂຍບາຍທີ່ກ່ຽວຂ້ອງໃນລະດັບຊາດ** ໂດຍການໃຫ້ການສະໜັບສະໜູນລັດຖະບານໃນການປັບປຸງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ 10 ຂອງ ສປປ ລາວ ປີ 2026-2030.

ໃນຖານະເປັນສ່ວນໜຶ່ງຂອງແຜນງານພາກພື້ນອາຊຽນວ່າດ້ວຍຍຸດທະສາດການຈັດຕັ້ງປະຕິບັດວາລະ WPS ຢູ່ພາຍໃນປະເທດ, ແຜນງານ AMPLIFY ໃນສປປ ລາວ ຈະຊ່ວຍເຫຼືອພາກລັດຖະບານ ແລະ ອົງການຈັດຕັ້ງທາງສັງຄົມໃນການເຂົ້າຮ່ວມເວທີການແລກປ່ຽນຄວາມຮູ້ ແລະ ການຮຽນຮູ້ໃນລະດັບພາກພື້ນ ແລະ ລະດັບຊາດ ແລະ ການປະກອບສ່ວນ ເຂົ້າໃນການສົນທະນາວາລະ WPS ໃນຂັ້ນພາກພື້ນ ແລະ ອາຊຽນ. ຄວາມພະຍາຍາມເຫຼົ່ານີ້ ແມ່ນໄດ້ຮັບການ ຊີ້ແນະໂດຍທິດສະດີການປ່ຽນແປງ ແລະ ກອບວຽກຕິດຕາມ, ປະເມີນຜົນ, ຄົ້ນຄວ້າ ແລະ ການຮຽນຮູ້ ຂອງໂຄງການ AMPLIFY. ເຊິ່ງຈະຖືກຈັດຕັ້ງປະຕິບັດຜ່ານການສົ່ງເສີມການຈັດຕັ້ງປະຕິບັດວາລະ WPS ຢູ່ພາຍໃນປະເທດ ແລະ **ຮູບແບບການຮ່ວມມືທີ່ຖືກປັບໃຫ້ສອດຄ່ອງກັບສະພາບການ** ເຊິ່ງເປັນການເສີມຂະຫຍາຍ**ການຮ່ວມມືກ່ຽວກັບວາລະ WPS ລະຫວ່າງອາຊຽນ-ນິວຊີແລນ**.

ສຳລັບຂໍ້ມູນເພີ່ມເຕີມ:
www.asiafoundation.org/amplify amplifyinfo@asiafoundation.org

AMPLIFY
The Asia Foundation

NEW ZEALAND
FOREIGN AFFAIRS & TRADE
Manatū Aorere